ສຳນັກງານໃຫຍ່

ເລກທີ: 2048/ທຄຕລ.2024
ນະຄອນຫຼວງວຽງຈັນ, ວັນທີ: 07 JUN 2024

ໜັງສືແຈ້ງເຊີນ

ເຖິງ: ບັນດາບໍລິສັດ/ຫ້າງຮ້ານຕົວແທນຈຳໜ່າຍ ສິນຄ້າເຄື່ອງທີ່ລະນึก ຢູ່ໃນນະຄອນຫຼວງວຽງຈັນ.

ເລື່ອງ: ເຊີນເຂົ້າຮ່ວມການປະມູນລາຄາເຄື່ອງທີ່ລະນึก ຂອງ ທຄຕລ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍແຈ້ງມາຍັງບັນດາບໍລິສັດ/ຫ້າງຮ້ານຕົວແທນຈຳໜ່າຍສິນຄ້າເຄື່ອງທີ່ລະນึก ເພື່ອເຂົ້າຮ່ວມການປະມູນລາຄາ ທີ່ ທຄຕລ ຈະນຳໃຊ້ເປັນເຄື່ອງທີ່ລະນึกໃຫ້ແກ່ລູກຄ້າ ຕາມລາຍລະອຽດລຸ່ມນີ້:

ລ/ດ	ລາຍການ	ຈຳນວນ / ຮູບພາບ
1	**ຈອກແກ້ວ 4 ໜ່ວຍ/ກັບ** • ມີແຂບຄຳ ຢູ່ປາກຈອກ • ສະກຣີນສີທອງ 01 ຈຸດ • ກັບເจ้ยแขวงแดง	**5,000 ກັບ (20,000 ໜ່ວຍ)**
2	**ປາກກາ (Gold pen)** • Liquid Gel Ink. • 0,7 mm.	**2,000 ກ້ານ** 
3	**ຄັນຮົ່ມກ້ານສັ້ນ 02 ພັບ** • ຜ້າ: 190T Polyester ເຄືອບກັນ UV, ໂຄງເຫຼັກດຳ, ພິມສີຕາມ Artwork. • ດ້ານຈັບ: ພາສຕິກ, ປຸ່ມກົດມີເປີດ • ສາຍຮັດ: ແບບຕິດ • ຊອງໃສ່ຄັນຮົ່ມ: ຊອງຜ້າສີແດງ	**10,000 ກ້ານ**
4	**ປຶ້ມບັນທຶກ** • ຂະໜາດ A5, ໃສ່ຢ່ອງຂາວເຕັມເຫຼັ້ມ • ປົກໜ້າ-ຫຼັງ ເจ้ยภาพติง ເບີ 24 ພິມສີດ້ານ • ເจ้ยทางใน: เจ้ยปอมขาวหา 80 แกรม ຈຳນວນ 200 ໜ້າ (100 ໃບ) ບໍ່ລວມໜ້າປົກ, ດ້ານໃນພິມ ໂລโก้ ທຄຕລ ຕາມ Artwork. • ການຫຸ້ມຫໍ່: 20 ຫົວ/ແກັດ.	**10,000 ຫົວ**

ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-3, 223243-4, 255080-5
Website: http:/www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

5	**ຖົງຜ້າ** • ຜ້າຝ້າຍ ຂະໜາດ 34*34*12 cm • ພິມສີຕາມ Artwork.	**10,000 ຖົງ**
6	**Griptok (ແນວຕິດຫຼັງໂທລະສັບ)** • ຂະໜາດ 5cm * 5cm	**5,000 ອັນ** 
7	**ຈອກນ້ຳ ເກັບອຸນຫະພູມ** • ທາງໃນເປັນສະແຕນເລດ SUS 304 • ມີຊິລິໂຄ່ນ ກັນມຶ້ນ ຢູ່ພື້ນຈອກ	**5,000 ໜ່ວຍ**

ໝາຍເຫດ:

1. ສາມາດເຂົ້າມາເບິ່ງຕົວຢ່າງແທ້ ຫຼື ຫາກຕ້ອງການຟາຍຮູບເພີ່ມຕື່ມ ຫຼື VIDEO ຂອງເຄື່ອງຕົວຈິງສາມາດພົວພັນໄດ້ທີ່ ພະແນກຫ້ອງການບໍລິຫານ-ການເງິນ ທຄຕລ ສຳນັກງານໃຫຍ່ ຊັ້ນ 4 ຕຶກ C ແຕ່ວັນນີ້ ຈົນເຖິງ 21/06/2024 ໃນໂມງລັດຖະການ.
2. ຜູ້ສະໜອງສາມາດເຂົ້າຮ່ວມປະມູນທຸກລາຍການ ຫຼື ລາຍການໃດໜຶ່ງ ກໍ່ໄດ້, ສ່ວນການພິຈາລະນາແມ່ນ ທຄຕລ ຈະຄັດເລືອກ ແຍກເປັນແຕ່ລະລາຍການ.
3. ການຄັດເລືອກຜູ້ສະໜອງແມ່ນຈະຄັດເລືອກຈາກຫຼາຍເງື່ອນໄຂ (ບໍ່ໄດ້ຄັດເລືອກຈາກລາຄາພຽງຢ່າງດຽວ).

➢ **ເງື່ອນໄຂຂອງຜູ້ສະໜອງທີ່ຕ້ອງການຮ່ວມຍື່ນຊອງປະມູນຕ້ອງປະກອບເອກະສານ ດັ່ງນີ້:**

- **<u>ເອກະສານຊອງທີ່</u> 1**:

1. ປະກອບເອກະສານໃນນາມນິຕິບຸກຄົນ ສຳເນົາໃບທະບຽນວິສາຫະກິດ, ໃບອະນຸຍາດດຳເນີນທຸລະກິດປະຈຳປີ, ໃບຢັ້ງຢືນການເສຍອາກອນຢ່າງໜ້ອຍ 2023 – 2024.
2. ຜູ້ສະໜອງຕ້ອງລະບຸລາຍລະອຽດສິນຄ້າ ພ້ອມທັງລະບຸເງື່ອນໄຂຕ່າງໆໃຫ້ຄົບຖ້ວນ ແລະ ກົງກັບຄວາມຕ້ອງການ ໃນຕາຕະລາງຂ້າງເທິງນີ້, ແຫຼ່ງຜະລິດສິນຄ້າ, ລະບຸໄລຍະເວລາໃນການຮັບປະກັນ, ລະບຸໄລຍະການຜະລິດ, ຜົນງານຜ່ານມາທີ່ເຄີຍສະໜອງສິນຄ້າປະເພດຕັ້ງກ່າວໃຫ້ພາກສ່ວນອື່ນ (ຕາມແບບຟອມຄັດຕິດແຈ້ງເຊີນ).
3. ເອກະສານເງື່ອນໄຂ ຂໍ້ 1 ແລະ 2 ແມ່ນ ສົ່ງຟາຍສະແກນເຂົ້າມາທີ່ Email: procurement@bcel.com.la ສ່ວນສິນຄ້າຕົວຢ່າງທີ່ຈະເຂົ້າຮ່ວມປະມູນ ແມ່ນໃຫ້ມາສົ່ງກ່ອນ ວັນທີ 21/06/2024 ເວ ລາ 11:00 ໂມງ ທີ່ພະແນກຫ້ອງການບໍລິຫານ-ການເງິນ ຊັ້ນ 4 ຕຶກ C.

- **<u>ເອກະສານຊອງທີ 2 (ປິດຊອງ)</u>**:

1. ທຄຕລ ຈະແຈ້ງສະເພາະຜູ້ທີ່ຜ່ານເງື່ອນໄຂ ຮອບທີ 01 ເທົ່ານັ້ນ ເພື່ອເຂົ້າມາຍື່ນຊອງລາຄາ ໃນວັນຄານ, ທີ **02/07/2024 ເວລາ 09:00** ໂມງ. ສະນັ້ນ, ຜູ້ສະໜອງຈະຕ້ອງຖືຊອງລາຄາມາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ຫ້ອງປະຊຸມຊັ້ນ 05 ຕຶກ C.
2. ໃບສະເໜີລາຄາໃຫ້ລະບຸ ລາຄາ/ໜ່ວຍ ແລະ ລວມມູນຄ່າອາກອນທັງໝົດເປັນສະກຸນເງິນກີບ, ພ້ອມທັງລະບຸມື້ໝົດກຳນົດເວລາໃນໃບສະເໜີລາຄາດັ່ງກ່າວ (Expire date) ຢ່າງໜ້ອຍ 20 ວັນລັດຖະການ.
3. ຜູ້ສະໜອງຕ້ອງວາງເງິນຄ້ຳປະກັນການປະມູນຕ່ຳສຸດ 2% ຂອງມູນຄ່າທັງໝົດ ໂດຍໜັງສືຄ້ຳປະກັນທີ່ອອກໂດຍທະນາຄານພາຍໃນປະເທດ (ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງ ວັນທີ 02/08/2024) ຫຼື ແຊັກທີ່ວິຊ້ຳແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄ້ຳປະກັນດັ່ງກ່າວຄືນ.

<u>ໝາຍເຫດ</u>: ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ປະກອບເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກຳນົດຂ້າງເທິງ.

➢ **ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:**

- ຜູ້ຊະນະການປະມູນຕ້ອງໄດ້ຜະລິດສິນຄ້າຕົວຈິງ 01 ອັນ ທີ່ຖືກຕ້ອງຕາມ Spec ທີ່ ທຄຕລ ລະບຸ ມາ ຜ່ານຕາມ Artwork ທີ່ ທຄຕລ ກຳນົດ ພາຍໃນ 14 ວັນ ແລະ ຕ້ອງມີຄວາມສາມາດຈັດສົ່ງສິນຄ້າ ຈຳນວນທັງໝົດສຳເລັດພາຍໃນ 30 ວັນລັດຖະການ ນັບຈາກມື້ຮອງຮັບແບບ ແລະ ໄດ້ຮັບໜັງສືສັ່ງຊື້.
- ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ, ຜູ້ຊະນະການປະມູນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 2% ຂອງມູນຄ່າລວມທີ່ສະເໜີປະມູນ.
- ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຄ່າທຳນຽມໃນການຈົດທະບຽນສັນຍາ ແມ່ນ ມອບໃຫ້ເປັນຄວາມຮັບຜິດຊອບຂອງຜູ້ສະໜອງ.
- ການຊຳລະແມ່ນຈ່າຍເງິນງວດດຽວ 100% ຕາມມູນຄ່າສັ່ງຊື້ ພາຍຫຼັງໄດ້ຮັບເຄື່ອງຄົບຖ້ວນ ພ້ອມທັງໄດ້ຮັບການຢັ້ງຢືນຈາກພາກສ່ວນກ່ຽວຂ້ອງ ແລະ ກວດກາຄວາມຖືກຕ້ອງຈາກທັງສອງຝ່າຍ ພາຍໃນໄລຍະ 30 ວັນລັດຖະການ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

ຜູ້ອຳນວຍການ

ນ. ສາຍສະໝອນ ຈັນທະ

(ຕົວຢ່າງ) ລາຍລະອຽດເອກະສານການປະມູນ (ກະລຸນາຕື່ມຂໍ້ມູນ ແລະ ເຊັນຢັ້ງຢືນ)

- ອີງຕາມໃບແຈ້ງປະມູນ ສະບັບເລກທີ ……/ທຄຕລ, ລົງວັນທີ ……..

ລ/ດ	ຜູ້ສະໜອງ	ເງື່ອນໄຂ									ໝາຍເຫດ
		ໃບທະບຽນວິສາຫະກິດ	ໃບຢັ້ງຢືນການເສຍອາກອນ	ໃບອະນຸຍາດດຳເນີນທຸລະກິດ	ໄລຍະເວລາໃນການດຳເນີນທຸລະກິດ	ຜົນງານຜ່ານມາ (ທີ່ເຄີຍສະໜອງໃຫ້ພາກສ່ວນໃດແນ່)	ປະເພດ / ວັດສະດຸ / ຍີ່ຫໍ້ສິນຄ້າ	ປະເທດຜະລິດ	ການຮັບປະກັນສິນຄ້າ	ກຳນົດສົ່ງ (ວັນ)	
1	ບ/ສ……	(xxx/ 02.01.2015)	(xxx/ 02.01.2015)	(xxx/ 02.01.2015)	…. ປີ	(ໃຫ້ລະບຸ)		ພາຍໃນ ຫຼື ຕ່າງປະເທດ (ລະບຸປະເທດ)	…. ປີ	……	

ໝາຍເຫດ: ຂໍ້ມູນທີ່ແຈ້ງຂ້າງເທິງນີ້ ເປັນຄວາມຈິງທຸກປະການ, ຖ້າມີຂໍ້ມູນຜິດພາດ ຂ້າພະເຈົ້າຂໍຮັບຜິດຊອບເອງທຸກປະການ.

ນະຄອນຫຼວງວຽງຈັນ, ວັນທີ ……
ຜູ້ອຳນວຍການບໍລິສັດ

ຜູ້ປະສານງານບໍລິສັດ:
ຊື່:
ໂທ:

35
UNIVERSAL BEER
1989 - 2024

35
ปี
ทาลตล
BCEL
1989 - 2024

ທັນສະໄໝ ວ່ອງໄວ ໝັ້ນໃຈ MODERN QUICK RELIABLE
1555 | BCEL Bank
ທະນາຄານ BCEL
1989 - 2024
ທັນສະໄໝ ວ່ອງໄວ ໝັ້ນໃຈ MODERN QUICK RELIABLE
1555 | BCEL Bank
ທະນາຄານ BCEL
1989 - 2024
ທັນສະໄໝ ວ່ອງໄວ ໝັ້ນໃຈ MODERN QUICK RELIABLE

35
ทาลตล
BCEL
1989 - 2024

Height: 15 cm
Height: 34cm
35
ขาลตล
BCEL
1989 - 2024
Width: 34 cm
Dept: 12 cm

BCEL 35years

Griptok



※ Ringke Griptok has 3-Height Levels

ມີ ຊິລິໂຄນ ກັນມົ່ນ ຢູ່ພື້ນ